**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 110 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 29.03.2017

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການສືບຕໍ່ສັບຊ້ອນວຽກງານຂອງລັດຖະບານ ສະບັບເລກທີ 83/ນຍ, ລົງວັນທີ 28 ຕຸລາ 2016;
- ອີງຕາມໜັງສືສະເໜີ ຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ສະບັບເລກທີ 10/ຄກມຊ, ລົງວັນທີ 06 ມີນາ 2017;
- ອີງຕາມໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 70/ພນ, ລົງວັນທີ 20 ມີນາ 2017;

**ນາຍົກລັດຖະມົນຕີ ອອກດຳລັດ**

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຊຸກຍູ້ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂຽນເປັນຕົວອັກສອນຫຍໍ້ວ່າ: "ຄຊກມດ" ແມ່ນການຈັດຕັ້ງໜຶ່ງຂອງລັດຖະບານທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການຊ່ວຍວຽກລັດຖະບານ ໃນການສຶກສາ, ຄົ້ນຄວ້າກຳນົດນະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນດຳເນີນງານ, ແຜນງານ ແລະ ຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ ແລະ ຖະແຫຼງການຂອງພາກພື້ນ ແລະ ສາກົນ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງແມ່ຍິງໃນທຸກດ້ານ, ສົ່ງເສີມ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ຕິດພັນກັບການສຶກສາອົບຮົມ ແລະ ພັດທະນາເດັກຢ່າງຮອບດ້ານ ເພື່ອປະກອບສ່ວນເຂົ້າໃນຂະບວນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດນິຕິກຳ ຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານວາງອອກຢ່າງເຂັ້ມງວດ;
2. ຄົ້ນຄວ້າຮ່າງນະໂຍບາຍ, ສ້າງແຜນຍຸດທະສາດ, ນິຕິກຳ, ແຜນດຳເນີນງານ, ແຜນງານກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ຕາມການມອບໝາຍ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
3. ຄົ້ນຄວ້າຫັນເອົານະໂຍບາຍ, ນິຕິກຳ, ແຜນການ, ມະຕິຕົກລົງຂອງລັດຖະບານ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ, ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສົນທິສັນຍາວ່າດ້ວຍສິດທິເດັກ ລວມທັງບັນດາອະນຸສັນຍາເພີ່ມເຕີມ ຂອງສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສົນທິສັນຍາ, ສັນຍາ ແລະ ຖະແຫຼງການຂອງພາກພື້ນ ແລະ ສາກົນຕ່າງໆ ທີ່ກ່ຽວພັນເຖິງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ທີ່ລັດຖະບານ ສປປ ລາວ ເປັນພາຄີ ມາສ້າງເປັນຍຸດທະສາດ, ນິຕິກຳ, ແຜນດຳເນີນງານ, ແຜນງານ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃນແຕ່ລະໄລຍະ ເພື່ອນຳສະເໜີລັດຖະບານພິຈາລະນາຮັບຮອງ ແລະ ປະກາດໃຊ້;
4. ຄົ້ນຄວ້າສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນໆຂອງສາກົນທີ່ກ່ຽວຂ້ອງກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ເພື່ອນຳສະເໜີລັດຖະບານພິຈາລະນາຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າເປັນພາຄີ ຫຼື ຍົກເລີກ;
5. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການຕ່າງໆຂອງລັດ, ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ ລວມທັງບັນດາອະນຸ

ສັນຍາເພີ່ມເຕີມ ຂອງສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສົນທິສັນຍາ, ສັນຍາ ແລະ ຖະແຫຼງການຂອງພາກພື້ນ ແລະ ສາກົນ ທີ່ ລັດຖະບານ ສປປ ລາວ ເປັນພາຄີ ທີ່ກ່ຽວພັນກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ, ການລົບລ້າງທຸກຮູບການຈຳແນກ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ ແລະ ເດັກ ພ້ອມທັງສ້າງເປັນບົດລາຍງານແຫ່ງຊາດໃນແຕ່ລະໄລຍະ ເພື່ອນຳສະເໜີລັດຖະບານຮັບຮອງ ແລະ ລາຍງານຕໍ່ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຕາມລະບຽບການ;

6. ໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ, ຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ທີ່ກ່ຽວພັນເຖິງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ແລະ ຜົນຂອງການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ໃຫ້ພາກສ່ວນຕ່າງໆ ລວມທັງສັງຄົມ ໃຫ້ຮັບຮູ້, ເຂົ້າໃຈເຖິງຄວາມສຳຄັນຂອງວຽກງານດັ່ງກ່າວ ພ້ອມທັງໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;
7. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດຍຸດທະສາດ, ນິຕິກຳ, ແຜນດຳເນີນງານແຫ່ງຊາດ, ແຜນງານ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃນແຕ່ລະໄລຍະ ເພື່ອລາຍງານລັດຖະບານ; ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ, ສົນທິສັນຍາວ່າດ້ວຍສິດທິເດັກ ລວມທັງບັນດາອະນຸສັນຍາເພີ່ມເຕີມຂອງສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສົນທິສັນຍາ, ສັນຍາ ແລະ ຖະແຫຼງການຂອງພາກພື້ນ ແລະ ສາກົນຕ່າງໆ ທີ່ກ່ຽວພັນເຖິງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ເພື່ອລາຍງານ ແລະ ສະເໜີລັດຖະບານຮັບຮອງ ແລະ ລາຍງານຕໍ່ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຕາມລະບຽບການ;
8. ແປ, ຮຽບຮຽງ, ຈັດພິມ ແລະ ເຜີຍແຜ່ບັນດາສົນທິສັນຍາສາກົນ, ສັນຍາ, ຂໍ້ຕົກລົງ, ແຜນປະຕິບັດງານຕ່າງໆຂອງສາກົນ ທີ່ກ່ຽວພັນເຖິງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ, ການລົບລ້າງທຸກຮູບການຈຳແນກ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ສິດທິເດັກ;
9. ສ້າງຖານຂໍ້ມູນຂ່າວສານ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ແລະ ຄວາມຄືບໜ້າກ່ຽວກັບການປະຕິບັດວຽກງານດັ່ງກ່າວ ເພື່ອໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການ ລວມທັງຜ່ານລະບົບຂ່າວສານເອເລັກໂຕຣນິກ, ສື່ມວນຊົນ ແລະ ຂະບວນການຕ່າງໆ;
10. ຈັດກອງປະຊຸມສຳມະນາ, ຝຶກອົບຮົມເພື່ອຍົກລະດັບຄວາມສາມາດ ແລະ ປະສິດທິພາບໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃຫ້ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ໃນແຕ່ລະຂັ້ນ;
11. ພົວພັນ ແລະ ຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງເອົາການສະໜັບສະໜູນ, ການຊ່ວຍເຫຼືອທາງດ້ານທຶນຮອນ, ວິຊາການ ແລະ ບົດຮຽນ ເພື່ອນຳໃຊ້ເຂົ້າໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ;

12. ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ;
13. ສະຫຼຸບລາຍງານວຽກງານຂອງຕົນ ໃຫ້ລັດຖະບານຊາບເປັນປົກກະຕິ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

1. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃນຂອບເຂດທົ່ວປະເທດ;
2. ຄົ້ນຄວ້າ, ປະກອບຄໍາເຫັນໃສ່ບັນດາແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ, ຂໍ້ຕົກລົງສອງຝ່າຍ, ຫຼາຍຝ່າຍ ແລະ ເອກະສານສາກົນຕ່າງໆ ລວມທັງການພິຈາລະນາຮັບຮອງເອົາສົນທິສັນຍາ, ຖະແຫຼງການ ແລະ ສັນຍາ ໃນລະດັບພາກພື້ນ ແລະ ສາກົນ ທີ່ກ່ຽວພັນເຖິງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ;
3. ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ຢູ່ພາຍໃນ ແລະ ຕ່າງປະເທດ;
4. ເລັ່ງທວງໄປຍັງບັນດາຂະແໜງການຕ່າງໆຂອງສູນກາງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພື່ອລາຍງານ ແລະ ຕອບສະໜອງຂໍ້ມູນຕ່າງໆທີ່ກ່ຽວພັນເຖິງຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ;
5. ຈັດກອງປະຊຸມປຶກສາຫາລື ແລະ ແລກປ່ຽນບົດຮຽນກັບພະນັກງານ-ລັດຖະກອນ, ບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ແລະ ວຽກງານອື່ນ ທີ່ຂຶ້ນກັບຄວາມຮັບຜິດຊອບ;
6. ດໍາເນີນກອງປະຊຸມສະໄໝສາມັນຕາມລະບຽບການ ແລະ ກອງປະຊຸມສະໄໝວິສາມັນຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ;
7. ຕົກລົງແຕ່ງຕັ້ງພະນັກງານເຂົ້າຮ່ວມກອງປະຊຸມຢູ່ພາຍໃນ ແລະ ຂໍອະນຸມັດໃຫ້ພະນັກງານເຂົ້າຮ່ວມກອງປະຊຸມຢູ່ຕ່າງປະເທດ ຕາມລະບຽບການ;
8. ມີຄໍາເຫັນຕໍ່ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ຍົກຍ້າຍໜ້າທີ່, ປົດຕໍາແໜ່ງ, ປະຕິບັດວິໄນ, ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນຂັ້ນຕ່າງໆ ທີ່ຢູ່ໃນຂອບເຂດການຄຸ້ມຄອງຂອງຕົນ;
9. ຄຸ້ມຄອງ, ນໍາໃຊ້ງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ຕ່າງໆ ຕາມລະບຽບການທີ່ກໍານົດໄວ້;
10. ປະຕິບັດສິດອື່ນ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ປະກອບມີ:

**1. ຂັ້ນສູນກາງ**

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີຫ້ອງການກອງເລຂາຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ສູນກາງສະຫະພັນແມ່ຍິງລາວ ເປັນກົງຈັກຊ່ວຍວຽກ.

**2. ຂັ້ນກະຊວງ, ອົງການທຽບເທົ່າຂັ້ນສູນກາງ**

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ກະຊວງ, ອົງການ ຂຽນຫຍໍ້ວ່າ: " ຄກມດ ກະຊວງ/ອົງການ " ໂດຍແມ່ນຮອງລັດຖະມົນຕີ/ຮອງຫົວໜ້າອົງການ ເປັນປະທານ, ມີຮອງປະທານ ຈຳນວນໜຶ່ງ ທີ່ມາຈາກສະຫະພັນແມ່ຍິງ, ກົມຈັດຕັ້ງ ແລະ ພະນັກງານ, ຫ້ອງການ ແລະ ກຳມະການຕາມຄວາມເໝາະສົມ; ມີພະແນກຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ຫ້ອງການກະຊວງ, ອົງການ ເປັນກົງຈັກຊ່ວຍວຽກ.

**3. ຂັ້ນແຂວງ, ນະຄອນຫຼວງ**

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແຂວງ, ນະຄອນຫຼວງ ຂຽນຫຍໍ້ວ່າ: " ຄກມດ ແຂວງ/ນະຄອນຫຼວງ " ໂດຍແມ່ນຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນປະທານ, ມີຮອງປະທານຈຳນວນໜຶ່ງ ທີ່ມາຈາກສະຫະພັນແມ່ຍິງ, ຄະນະຈັດຕັ້ງ, ຫ້ອງວ່າການ, ພະແນກແຜນການ ແລະ ການລົງທຶນ ແລະ ກຳມະການຕາມຄວາມເໝາະສົມ; ມີຂະແໜງຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ສະຫະພັນແມ່ຍິງແຂວງ, ນະຄອນຫຼວງ ເປັນກົງຈັກຊ່ວຍວຽກ.

**4. ຂັ້ນເມືອງ, ເທດສະບານ, ນະຄອນ**

ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເມືອງ, ເທດສະບານ, ນະຄອນ ຂຽນຫຍໍ້ວ່າ: " ຄກມດ ເມືອງ/ເທດສະບານ/ນະຄອນ " ໂດຍແມ່ນຮອງເຈົ້າເມືອງ/ຮອງຫົວໜ້າເທດສະບານ/ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນປະທານ, ມີຮອງປະທານຈຳນວນໜຶ່ງ ທີ່ມາຈາກສະຫະພັນແມ່ຍິງ, ຄະນະຈັດຕັ້ງ, ຫ້ອງວ່າການ ແລະ ກຳມະການຕາມຄວາມເໝາະສົມ; ມີໜ່ວຍງານຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ສະຫະພັນແມ່ຍິງເມືອງ, ເທດສະບານ, ນະຄອນ ເປັນກົງຈັກຊ່ວຍວຽກ.

5. ຂັ້ນບ້ານ

ມອບໃຫ້ນາຍບ້ານເປັນຜູ້ແຕ່ງຕັ້ງປະທານສະຫະພັນແມ່ຍິງບ້ານ ເປັນຜູ້ປະສານງານກັບໜ່ວຍງານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງພາຍໃນບ້ານ ແລະ ນໍາພາໃນການຈັດຕັ້ງປະຕິບັດແຜນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນຂອງຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ປະກອບມີ:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ປະທານສູນກາງສະຫະພັນແມ່ຍິງລາວ ເປັນຮອງປະທານ, ທັງເປັນຜູ້ປະຈໍາການ;
3. ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ ເປັນຮອງປະທານ;
4. ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
5. ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນຮອງປະທານ;
6. ຮອງລັດຖະມົນຕີກະຊວງພາຍໃນ ເປັນຮອງປະທານ;
7. ຮອງລັດຖະມົນຕີກະຊວງຍຸຕິທໍາ ເປັນຮອງປະທານ;
8. ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ເປັນກໍາມະການ;
9. ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນກໍາມະການ;
10. ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນກໍາມະການ;
11. ຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນກໍາມະການ;
12. ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນກໍາມະການ;
13. ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນກໍາມະການ;
14. ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກໍາມະການ;
15. ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເປັນກໍາມະການ;
16. ຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເປັນກໍາມະການ;
17. ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເປັນກໍາມະການ;
18. ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກໍາມະການ;
19. ຮອງລັດຖະມົນຕີກະຊວງການເງິນ ເປັນກໍາມະການ;
20. ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນກໍາມະການ;
21. ຮອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນກໍາມະການ;
22. ຮອງລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນກໍາມະການ;
23. ຮອງລັດຖະມົນຕີກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນກໍາມະການ;
24. ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ເປັນກໍາມະການ;
25. ຮອງປະທານ ກໍາມາທິການວັດທະນະທໍາ-ສັງຄົມ, ສະພາແຫ່ງຊາດ ເປັນກໍາມະການ;

26. ຮອງປະທານ ສານປະຊາຊົນສູງສຸດ ເປັນກຳມະການ;
27. ຮອງປະທານ ອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ;
28. ຮອງຫົວໜ້າ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ເປັນກຳມະການ;
29. ຮອງຫົວໜ້າ ສະຖາບັນການເມືອງ-ການປົກຄອງແຫ່ງຊາດ ເປັນກຳມະການ;
30. ຮອງປະທານ ສະຫະພັນນັກຮົບເກົ່າແຫ່ງຊາດລາວ ເປັນກຳມະການ;
31. ຮອງປະທານ ສູນກາງແນວລາວສ້າງຊາດ ເປັນກຳມະການ;
32. ຮອງເລຂາ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
33. ຮອງປະທານ ສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
34. ຮອງຫົວໜ້າ ຄະນະໂຄສະນາອົບຮົມສູນກາງພັກ ເປັນກຳມະການ;
35. ຫົວໜ້າ ຫ້ອງການກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເປັນກຳມະການ;

## ໝວດທີ 4
### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະກ່ຽວກັບວຽກງານລວມຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງສະມາຊິກຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ;
3. ທຸກການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ກົງຈັກຊ່ວຍວຽກ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເຄື່ອນໄຫວວຽກງານແບບບໍ່ປະຈຳການ, ຖືເອົາລະບອບປະຊຸມ 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການເພື່ອເປັນການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ແລະ ວາງທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ ພ້ອມທັງລາຍງານເປັນປົກກະຕິໃຫ້ແກ່ລັດຖະບານ; ໃນກໍລະນີຈຳເປັນ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ສາມາດເປີດກອງປະຊຸມວິສາມັນຂອງຄະນະຂຶ້ນເພື່ອພິຈາລະນາບັນຫາຮີບດ່ວນ. ການດຳເນີນກອງປະຊຸມຄົບຄະນະແຕ່ລະຄັ້ງຕ້ອງປະກອບດ້ວຍບຸກຄະລາກອນໃນຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ບໍ່ຕ່ຳກວ່າໜຶ່ງສ່ວນສອງ ຈຶ່ງຈະສາມາດເປີດກອງປະຊຸມໄດ້.

ຄະນະປະທານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ປະຕິບັດລະບອບປະຊຸມ, ສ່ອງແສງ ແລະ ລາຍງານ 4 ຄັ້ງຕໍ່ປີ (ປະຈຳໄຕມາດ) ເພື່ອສະຫຼຸບຖອດຖອນບົດຮຽນ ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ;

3. ປະສານສົມທົບຢ່າງແໜ້ນແຟ້ນ ກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກໃຫ້ດີຂຶ້ນ.

## ໝວດທີ 5
### ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ, ຕາປະທັບ ແລະ ເຄື່ອງໝາຍ**

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີງົບປະມານ ເພື່ອໃຊ້ໃນການເຄື່ອນໄຫວວຽກງານ ຊຶ່ງເປັນຫົວໜ່ວຍງົບປະມານຂັ້ນ 1. ສຳລັບຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ກະຊວງ, ອົງການ ແລະ ແຂວງ, ນະຄອນຫຼວງ ແມ່ນນຳໃຊ້ງົບປະມານຕາມການແບ່ງປັນຂອງແຕ່ລະພາກສ່ວນຕາມຄວາມເໝາະສົມ ໂດຍການຂຶ້ນແຜນການເຄື່ອນໄຫວວຽກງານໃນແຕ່ລະໄລຍະ.

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ກົງຈັກຊ່ວຍວຽກ ມີຕາປະທັບຂອງຕົນ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍປະຕິບັດຕາມລະບຽບການຂອງລັດ.

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ມີເຄື່ອງໝາຍເປັນຂອງ ຕົນເອງ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກຊ່ວຍວຽກ ແລະ ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂັ້ນກະຊວງ, ອົງການ, ຂັ້ນແຂວງ, ນະຄອນຫຼວງ, ຂັ້ນເມືອງ, ເທດສະບານ, ນະຄອນ ແລະ ຂັ້ນບ້ານ ທີ່ກຳນົດໃນມາດຕາ 5 ຂອງດຳລັດສະບັບນີ້ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ສູນກາງສະຫະພັນແມ່ຍິງລາວ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ສະບັບເລກທີ 561/ນຍ, ລົງວັນທີ 29 ທັນວາ 2011 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການເພື່ອແມ່ ແລະ ເດັກແຫ່ງຊາດ ສະບັບເລກທີ 221/ນຍ, ລົງວັນທີ 05 ກັນຍາ 2013.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ